ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ການພັດທະນາເສັ້ນທາງເຂົ້າຫາຊຸມຊົນຂອງ ເຂື່ອນໄຟຟ້ານໍ້າຄານ 2

ຄຽງຄູ່ກັບການຜະລິດພະລັງງານໄຟຟ້າຂອງ ສປປ ລາວ ກໍ່ຄືຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ການພັດທະນາ ພື້ນຖານໂຄງລ່າງຂອງຊຸມຊົນອ້ອມຂ້າງເຂື່ອນ ຖືເປັນສິ່ງທີ່ສຳຄັນ ແລະ ເປັນໝາກຫົວໃຈຫຼັກ ຂອງການພັດທະນາ ໂດຍສະເພາະ ຊີວິດການເປັນຢູ່ຂອງປະຊາຊົນ ທີ່ອາໄສຢູ່ອ້ອມຂ້າງບັນດາເຂື່ອນຂອງບໍລິສັດ.

ເຂື່ອນໄຟຟ້ານໍ້າຄານ 2-3 ເປັນໜຶ່ງໃນບັນດາເຂື່ອນທີ່ ຜ-ຟຟລ ເປັນຜູ້ຄຸ້ມຄອງ, ຊຶ່ງປັດຈຸບັນພວມມີການພັດທະນາ ໂຄງການປັບປຸງເສັ້ນທາງເຂົ້າຫາເຂື່ອນ ໄຟຟ້ານໍ້າຄານ 2 ທີ່ໄດ້ມີການລິເລີ່ມລົງມືປະຕິບັດ ໂດຍແມ່ນເສັ້ນທາງ ໝາຍເລກ 2 ແຕ່ທ່າເຮືອແກ້ງກຸ້ງ ບ້ານ ພູຊ້າງ, ເມືອງຊຽງເງິນ ແຂວງຫຼວງພະບາງ ຫາ ເຂື່ອນໄຟຟ້ານໍ້າຄານ 2 ເຊິ່ງມີຄວາມຍາວ ປະມານ 6 ກິໂລແມັດ. ມາຮອດຕົ້ນເດືອນ ຕຸລາ 2019 ນີ້ ແມ່ນໄດ້ສຳເລັດການອະນາໄມ ແລະ ບຸກເບີກຂອບທາງແລ້ວຊຶ່ງມີຄວາມຍາວປະມານ 3 ກິໂລແມັດ.

ໂຄງການປັບປຸງເສັ້ນທາງ ພາຍໃນເຂື່ອນ ໄຟຟ້ານໍ້າຄານ 2-3 ໄດ້ເລີ່ມລົງມືກໍ່ສ້າງໃນຕົ້ນເດືອນ ກໍລະກົດ 2019 ເປັນຕົ້ນມາ, ໂດຍທີ່ ຜ-ຟຟລ ໄດ້ເຊັນສັນຍາຮັບເໝົາກໍ່ສ້າງ ແລະ ມອບໃຫ້ບໍລິສັດ ກຸ່ມດວງຈະເລີນພັດທະນາກໍ່ສ້າງຈຳກັດຜູ້ດຽວ ເຊິ່ງແມ່ນຜູ້ຊະນະການປະມູນ ແລະ ເປັນຜູ້ດຳເນີນການກໍ່ສ້າງ ພາຍໃຕ້ການກວດກາ ການດຳເນີນ ແລະ ຮັບຮູ້ ໂດຍຄະນະຮັບຜິດຊອບ ຂອງ ເຂື່ອນໄຟຟ້ານໍ້າຄານ 2-3 ທີ່ຂຶ້ນກັບຝ່າຍຜະລິດຂອງ ຜ-ຟຟລ ຊຶ່ງໄລຍະຂອງການປະຕິບັດສັນຍາແມ່ນ ລະຫວ່າງ 2 ປີ.

ໂຄງການປັບປຸງເສັ້ນທາງດັ່ງກ່າວມີຄວາມຍາວທັງໝົດ 17 ກິໂລແມັດ, ກ້ວາງສະເລ່ຍ 6 ແມັດ, ປູຢາງສອງຊັ້ນ ມີຮ່ອງລະບາຍນໍ້າ, ປະກອບດ້ວຍເສັ້ນທາງຫຼັກຄື:

**ເສັ້ນທາງໝາຍເລກ 1:** ຈາກເສັ້ນທາງເລກທີ 13 ເໜືອ ສີ່ແຍກບ້ານປາກແວດ ຜ່ານບ້ານຈັດສັນບ້ານ ສາມັກຄີໄຊ ຫາຫ້ອງການຂອງເຂື່ອນໄຟຟ້ານໍ້າຄານ 3 ມີຄວາມຍາວ 1.4 ກິໂລແມັດ.

**ເສັ້ນທາງໝາຍເລກ 2:** ຈາກທ່າເຮືອແກ້ງກຸ້ງ ຫາ ຫ້ອງການເຂື່ອນໄຟຟ້ານໍ້າຄານ 2 ມີຄວາມຍາວ 6 ກິໂລແມັດ.

**ເສັ້ນທາງໝາຍເລກ 3:** ເສັ້ນທາງຈາກ ຫ້ອງການເຂື່ອນໄຟຟ້ານໍ້າຄານ 2 ຜ່ານຂົວນໍ້າຄານ ທີ່ເຂດບ້ານໜອງດີເກົ່າໄປຫາໂຮງຈັກ ແລະ ກັບໄປຮອດປ້ອມຍາມ ກ້ອງເຂື່ອນມີຄວາມຍາວ 1.5 ກິໂລແມດ.

**ເສັ້ນທາງໝາຍເລກ 4:** ເສັ້ນທາງຈາກ ສາມແຍກບ້ານໜອງດີເກົ່າ ຂຶ້ນໄປທາງ Spillway ຜ່ານ ເຂື່ອນຫີນແຂງອັດແໜ້ນ ສາບໜ້າດ້ວຍຄອນກຣີດ ຫາ ບ້ານຈັດສັນພູຊ້າງ ມີຄວາມຍາວ 8.2 ກິໂລແມດ.

ການປັບປຸງເສັ້ນທາງດັ່ງກ່າວແມ່ນເພື່ອ ແກ້ໄຂການສັນຈອນໄປມາ ຂອງປະຊາຊົນທີ່ອາໄສຢູ່ໃກ້ກັບເຂື່ອນໄຟຟ້ານໍ້າຄານ 2-3 ໃຫ້ມີຄວາມສະດວກ ແລະ ປອດໄພຂຶ້ນກວ່າເກົ່າ, ທັງນີ້ ກໍ່ເພື່ອເປັນການຍົກສູງຄຸນນະພາບຊີວິດການເປັນຢູ່ ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ. ສິ່ງດັ່ງກ່າວໄດ້ສະແດງອອກໃຫ້ເຫັນເຖິງຄວາມ ເອົາໃຈໃສ່ຂອງບໍລິສັດ ທີ່ຍາມໃດກໍ່ມີຄວາມເປັນຫ່ວງເປັນໄຍ ຕໍ່ ຊີວິດການເປັນຢູ່ຂອງປະຊາຊົນໃນເຂດນີ້.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la